ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

----***0000***----

ສຳນັກງານນາຍົກລັດຖະມົນຕີ ເລກທີ່.186./ນຍ

# ດຳລັດ

ວ່າດ້ວຍການແບ່ງດິນແບ່ງປ່າ
ເພື່ອການປູກໄມ້ ແລະ ປົກປັກຮັກສາປ່າໄມ້.

- ອີງໃສ່ ແນວທາງນະໂຍບາຍຂອງພັກ ແລະລັດຖະບານກ່ຽວກັບ ການປົກປັກຮັກສາ, ປູກ ແລະ ຂະຫຍາຍປ່າ ໃຫ້ນັບມື້ນັບອຸດົມສົມບູນ.
- ອີງໃສ່ສະພາບການ ການສູນເສັຽເນື້ອທີ່ປ່າໄມ້ຂອງປະເທດ ຊຶ່ງນັບວັນນັບເພີ່ມທະວີຂຶ້ນຊັກໄຊ້.
- ອີງໃສ່ ການສະເໜີຂອງ ກະຊວງ ກະສິກຳ-ປ່າໄມ້ ເລກທີ່..໑໒໒໑.../ກປ, ລົງວັນທີ່..໒໑/໐໖/໙໔

ເພື່ອຊຸກຍູ້ສົ່ງເສີມໃຫ້ມີການປູກໄມ້, ຟື້ນຟູ ແລະປົກປັກຮັກສາປ່າໄມ້ຢ່າງກວ້າງຂວາງ ໃນໝູ່ມະຫາຊົນ, ເຮັດໃຫ້ເນື້ອທີ່ປ່າໄມ້ໃນ ສ.ປ.ປ.ລາວ ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ ແລະອຸດົມຮັ່ງມີຂຶ້ນ ຢ່າງບໍ່ຢຸດຢັ້ງ.

ນາຍົກລັດຖະມົນຕີອອກດຳລັດ.

## ໝວດ I

### ຫລັກການລວມ

ມາດຕາ 1 : ດິນປ່າໄມ້ທີ່ມີປ່າທຳມະຊາດ ແລະດິນປ່າໄມ້ທີ່ບໍ່ມີປ່າກໍ່ເຊັ່ນດຽວກັບດິນປະເພດອື່ນໆ ລ້ວນແຕ່ເປັນຊັບສົມບັດຂອງວົງຄະນາຍາດແຫ່ງຊາດ, ປະຊາຊົນລາວທຸກຄົນ ມີໜ້າທີ່ຮ່ວມກັນຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາໃຫ້ມີຄວາມອຸດົມຮັ່ງມີຂຶ້ນ.

ມາດຕາ 2 : ລັດອະນຸຍາດ ແລະສົ່ງເສີມໃຫ້ນຳໃຊ້ ເນື້ອທີ່ດິນປ່າໄມ້ທີ່ເປັນ: ປ່າເຫລົ່າ ຊຶ່ງບໍ່ມີໄມ້ເປັນປະໂຫຍດ, ດິນປອກ ຫລ້ອນ, ປ່າຄັງ ແລະດິນປ່າໄມ້ຊຸດໂຊມ ເຂົ້າໃນການປູກໄມ້ ໃຫ້ເປັນປ່າຄືນໃຫມ່, ພ້ອມນັ້ນ ລັດມີນະໂຍບາຍແບ່ງ ແລະມອບປ່າໄມ້ທຳມະຊາດໃຫ້ບ້ານ ກຸ່ມກອງລວມຫມູ່ ເປັນຜູ້ຄຸ້ມຄອງ ແລະປົກປັກຮັກສາ.

ມາດຕາ 3: ລັດສົ່ງເສີມໃຫ້ບຸກຄົນ ແລະນິຕິບຸກຄົນ ທັງພາຍໃນ ແລະຕ່າງປະເທດ ລົງທຶນໃສ່ວຽກງານປູກໄມ້, ຟື້ນຟູປ່າ ແລະປົກປັກຮັກສາປ່າໄມ້ຢ່າງກວ້າງຂວາງ ຕາມລະບຽບການທີ່ວາງອອກ.

ມາດຕາ 4: ການປູກໄມ້ເປັນສິນຄ້າ ໃຫ້ສຸມໃສ່ປູກໄມ້ຊະນິດໃຫຍ່ໄວເປັນຕົ້ນຕໍ ໂດຍນຳໃຊ້ພັນພື້ນເມືອງ ແລະຕ່າງປະເທດ, ນອກນັ້ນໃຫ້ປູກໄມ້ສັກ ແລະໄມ້ເນື້ອແຂງອື່ນໆ ເພື່ອເປັນສິນຄ້າຍາວນານ.

## ຫມວດ II

### ຜູ້ມີສິດໄດ້ຮັບການແບ່ງ ແລະມອບດິນເພື່ອປູກໄມ້

ມາດຕາ 5: ລັດແບ່ງ ແລະມອບເນື້ອທີ່ດິນສຳລັບປູກໄມ້ ໃຫ້ຄອບຄົວປະຊາຊົນລາວ, ຄອບຄົວຊາວຕ່າງດ້າວທີ່ອາໃສຢູ່ໃນລາວ, ເພື່ອດຳເນີນກິດຈະການປູກໄມ້ ແລະປົກປັກຮັກສາ ແນໃສ່ເຮັດໃຫ້ເນື້ອທີ່ດັ່ງກ່າວ ກັບກາຍເປັນປ່າທີ່ອຸດົມສົມບູນຄືນໃຫມ່.

ມາດຕາ 6: ລັດແບ່ງ ແລະ ມອບເນື້ອທີ່ດິນສຳລັບປູກໄມ້ໃຫ້ບັນດາອົງການຈັດຕັ້ງຂອງລັດເຊັ່ນ : ກົມ, ກອງທະຫານ, ຕຳຫລວດ, ສຳນັກງານ, ອົງການ, ໂຮງຮຽນ, ໂຮງຫມໍ, ວັດ ເພື່ອປູກໄມ້ໃສ່ຕາມຄວາມສາມາດ ແລະເງື່ອນໄຂຂອງກຸ່ມກອງໃຜລາວ.

ມາດຕາ 7 : ລັດສະຫນັບສະຫນູນ ແລະ ມອບຫນ້າທີ່ໃຫ້ບັນດາບໍລິສັດ ຫຼື ຫົວຫນ່ວຍທຸລະກິດປ່າໄມ້ຄົບວົງຈອນຂອງລັດເຄື່ອນໄຫວ, ບຸກລະດົມ, ຊຸກຍູ້ ແລະ ປະຕິບັດວຽກງານປູກໄມ້ຕາມພາກຕ່າງໆ ທີ່ຕົນເອງຮັບຜິດຊອບໂດຍການສົມທົບ ປະສົມປະສານກັບປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

ມາດຕາ 8: ລັດອະນຸຍາດໃຫ້ ບັນດາຫົວຫນ່ວຍທຸລະກິດເອກະຊົນ ແລະບຸກຄົນພາຍໃນປະເທດ, ເພື່ອລົງທຶນເຂົ້າໃນວຽກງານປູກໄມ້ໃສ່ໃນດິນຂອງຕົນເອງ ຫລືລົງທຶນໃຫ້ປະຊາຊົນເປັນຜູ້ປູກໃຫ້ ບົນພື້ນຖານມີສັນຍາຜູກພັນນຳກັນ.

มาດຕາ 9: ລັດບໍ່ອະນຸຍາດໃຫ້ນັກທຸລະກິດຕ່າງປະເທດ ສຳປະທານດິນປ່າໄມ້ ເພື່ອປູກໄມ້ໂດຍຕົນເອງ ແຕ່ລັດອະນຸຍາດໃຫ້ ມາລົງທຶນກໍ່ສ້າງໂຮງງານປຸງແຕ່ງໄມ້ ແລະປູກໄມ້ ໃນປະເພດດິນທີ່ໄດ້ກຳນົດໄວ້ໃນມາດຕາ2 ເພື່ອເປັນວັດຖຸດິບປ້ອນໂຮງງານ ໂດຍການຮ່ວມລົງທຶນກັບບໍລິສັດຂອງລັດ ໂດຍແມ່ນປະຊາຊົນເປັນຜູ້ປູກ ແລະບໍລິສັດເປັນຜູ້ເກັບຊື້.

ມາດຕາ 10: ນອກຈາກການປູກໄມ້ຂອງຄອບຄົວ, ລວມໝູ່ ແລະບັນດານັກທຸລະກິດພາຍໃນ ແລະຕ່າງປະເທດແລ້ວ ລັດຍັງສາມາດ ມອບໃຫ້ປະຊາຊົນເປັນຜູ້ປູກ ແລະບົວລະບັດຮັກສາ ໂດຍລັດຈະເປັນຜູ້ຈ່າຍຄ່າແຮງງານ ແລະແບ່ງຜົນກຳໄລໃນການຂາຍໄມ້ປູກໃຫ້ ຕາມສົມຄວນ ຊຶ່ງລາຍລະອຽດ ກະຊວງກະສິກຳ-ປ່າໄມ້ ຈະມີຂໍ້ກຳນົດຕ່າງຫາກ. ນອກຈາກການມອບເໝົາໃຫ້ປະຊາຊົນພາຍໃນປະເທດແລ້ວ ລັດຍັງສາມາດຈ້າງເໝົາແຮງງານຈາກບໍລິສັດ ຫລືລວມໝູ່ຂອງຕ່າງປະເທດ ເພື່ອໃຫ້ປູກໄມ້ໃສ່ໃນເນື້ອທີ່ຂອງລັດ ບົນພື້ນຖານມີສັນຍາຜູກພັນນຳກັນ.

## ໝວດ III

### ຜູ້ມີສິດໄດ້ຮັບການແບ່ງ ແລະມອບປ່າທຳມະຊາດເພື່ອປົກປັກຮັກສາ

ມາດຕາ 11: ລັດມອບເນື້ອທີ່ປ່າໄມ້ທຳມະຊາດທີ່ມີຢູ່ໃນຂອບເຂດບ້ານ,ກົມກອງທະຫານ, ຕຳຫລວດ ແລະອົງການຈັດຕັ້ງອື່ນໆຂອງລັດ ເພື່ອໃຫ້ພາກສ່ວນດັ່ງກ່າວ ເປັນຜູ້ຄຸ້ມຄອງ ແລະປົກປັກຮັກສາ ບົນພື້ນຖານການມີສັນຍາກັບລັດ, ສ່ວນລາຍລະອຽດມອບໃຫ້ກະຊວງກະສິກຳ-ປ່າໄມ້ມີຂໍ້ແນະນຳຕ່າງຫາກ.

ມາດຕາ 12: ເນື້ອທີ່ປ່າໄມ້ ທີ່ລັດໄດ້ກຳນົດໃຫ້ເປັນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດນັ້ນແມ່ນລັດ ພ້ອມກັບປະຊາຊົນ, ກົມກອງ ທະຫານ ຕຳຫລວດເປັນຜູ້ຈັດຕັ້ງ ຄຸ້ມຄອງປົກປັກຮັກສາ, ຟື້ນຟູບູລະນະ, ປູກລົງໃໝ່ ແລະນຳໃຊ້ຕາມຄວາມເໝາະສົມ .

ມາດຕາ 13 : ຫ້າມບໍ່ໃຫ້ນຳໃຊ້ດິນປ່າໄມ້ເຂົ້າຮັບໃຊ້ວຽກງານ ຫຼືໂຄງການໃດນຶ່ງ ເຊິ່ງເປັນການທຳລາຍປ່າໄມ້, ເວັ້ນເສັຽແຕ່ໄດ້ຮັບອະນຸຍາດຈາກລັດຖະບານເທົ່ານັ້ນ.

# ໝວດ IV

## ນະໂຍບາຍ, ສິດຜົນປະໂຫຍດ ແລະຂໍ້ຫ້າມຕ່າງໆ

<u>ມາດຕາ 14</u>: ລັດມີນະໂຍບາຍຍົກເວັ້ນພາສີທີ່ດິນ ທີ່ໄດ້ນຳໃຊ້ເຂົ້າໃນການປູກໄມ້ເປັນຕົ້ນຕໍ່ນັ້ນໂດຍຕະຫລອດແຕ່ປ່າປູກ ທີ່ຈະໄດ້ຮັບການຍົກເວັ້ນພາສີທີ່ດິນນັ້ນ ຕ້ອງໃຫ້ມີຈຳນວນຕົ້ນໄມ້ປູກ ບໍ່ຫລຸດ 1100 ຕົ້ນຕໍ່ 1ຮຕ ຂື້ນໄປ ລາຍລະອຽດກະຊວງກະສິກຳ ຈະມີຂໍ້ແນະນຳຕ່າງຫາກ.

<u>ມາດຕາ 15</u>: ໃນກໍລະນີມີການປູກໄມ້ ປະສົມກັບພືດກະສິກຳຕ່າງໆ ຕາມລະບົບປ່າໄມ້-ປູກຝັງ ລັງງສັດ ກໍຈະໄດ້ ຮັບການຍົກເວັ້ນພາສີທີ່ດິນໃຫ້ເຊັ່ນດຽວກັນ ຖ້າຈຳນວນຕົ້ນໄມ້ປູກ ຫາກບໍ່ຫລຸດຈຳນວນທີ່ໄດ້ບົ່ງໄວ້ ໃນມາດຕາ 14.

<u>ມາດຕາ 16</u>: ປ່າໄມ້ປູກທີ່ບຸກຄົນ, ຄອບຄົວ, ລວມໝູ່, ບໍລິສັດລັດ ແລະເອກະຊົນໄດ້ປູກນັ້ນ ພາກສ່ວນດັ່ງກ່າວ ມີສິດຂາຍໄມ້ປູກ ແລະປ່າປູກຂອງຕົນເອງໄດ້ ໂດຍຈະໄດ້ຮັບການຍົກເວັ້ນ ການເກັບຄ່າບູລະມະ ແລະຄ່າຊັບພະຍາກອນທັງໝົດ ແຕ່ຕ້ອງໄດ້ເສັຽພາສີລາຍໄດ້ໃຫ້ລັດ ຕາມລະບຽບການ, ຖ້າມີການນຳໃຊ້ໄມ້ປູກຂອງຕົນເອງ ເຂົ້າໃນການສ້າງສາເຮືອນຊານຂອງຕົນ ຫລືລວມໝູ່ ກໍແມ່ນຈະໄດ້ຮັບການຍົກເວັ້ນ ຄ່າບູລະມະ ແລະຄ່າຊັບພະຍາກອນປ່າໄມ້ເຊັ່ນດຽວກັນ.

<u>ມາດຕາ 17</u> : ດິນປ່າໄມ້ທີ່ລັດມອບໃຫ້ບຸກຄົນ ແລະນິຕິບຸກຄົນເພື່ອປູກໄມ້ໃສ່ນັ້ນ ຖືວ່າເປັນດິນທີ່ຢູ່ໃນການຄຸ້ມຄອງຂອງຜູ້ກ່ຽວ ຊຶ່ງລັດຮັບປະກັນສິດນຳໃຊ້, ສິດໂອນ ແລະສິດສືບທອດຕາມກົດໝາຍ ພາຍໃຕ້ເງື່ອນໄຂ ເນື້ອທີ່ດິນດັ່ງກ່າວ ຕ້ອງມີໄມ້ປູກຕາມທີ່ໄດ້ກ່າວໄວ້ໃນມາດຕາ 14.

<u>ມາດຕາ 18</u>: ໃນກໍລະນີລັດມີຄວາມຈຳເປັນ ຕ້ອງການນຳໃຊ້ທີ່ດິນປູກໄມ້ ເຂົ້າໃນກິດຈະການສ້າງສາອື່ນໆ ຊຶ່ງຕ້ອງໄດ້ມີການແຕະຕ້ອງ ທຳລາຍປ່າໄມ້ປູກທີ່ມີຢູ່ໃນເວລານັ້ນ, ລັດຈະເປັນຜູ້ທົດແທນຄ່າເສັຽຫາຍຢ່າງສົມເຫດສົມຜົນ.

<u>ມາດຕາ 19:</u> ລັດອະນຸຍາດໃຫ້ບຸກຄົນ, ຄອບຄົວ ຫລືລວມໝູ່ ເຂົ້າຫາຢູ່ຫາກິນ, ຫາຫລົວຫາຟືນ, ເກັບກູ້ເຄື່ອງປ່າຂອງດົງ ທີ່ບໍ່ແມ່ນປະເພດຫວງຫ້າມ ເພື່ອຮັບໃຊ້ພາຍໃນຄອບຄົວ ໃນຂອບເຂດເນື້ອທີ່ປ່າໄມ້ທຳມະຊາດ ທີ່ລັດໄດ້ມອບໃຫ້ຄຸ້ມຄອງ ແລະປົກປັກຮັກສາ. ສ່ວນການຕັດຕົ້ນໄມ້ຢູ່ແຕ່ລະປະເພດປ່າທຳມະຊາດ ເພື່ອມາຮັບໃຊ້ການສ້ອມແປງຕ່າງໆນັ້ນ ແມ່ນໃຫ້ປະຕິບັດຕາມຂໍ້ແນະນຳຂອງ ກະຊວງ ກະສິກຳ-ປ່າໄມ້.

มาดตา 20: ລັດບໍ່ອະນຸຍາດໃຫ້ມີການແລກປ່ຽນຊື້-ຂາຍ, ໂອນສິດຄຸ້ມຄອງ ດິນປ່າໄມ້ທີ່ມີປ່າຫ້າມະຊາດ ຊຶ່ງລັດ ໄດ້ມອບໃຫ້ເພື່ອຄຸ້ມຄອງ ແລະປົກປັກຮັກສາຢ່າງເດັດຂາດ.

## ໝວດ V

### ການຈັດຕັ້ງປະຕິບັດ :

ມາດຕາ 21 : ການມອບເນື້ອທີ່ດິນເພື່ອປູກໄມ້ ໃນເນື້ອທີ່ 1-100 ຮຕ ແມ່ນມອບໃຫ້ອຳນາດການປົກຄອງ ຂັ້ນເມືອງສົມທົບພະແນກກະສິກຳ-ປ່າໄມ້ແຂວງຈັດຕັ້ງປະຕິບັດ ໂດຍມີການຮັບຮູ້ຈາກອຳນາດການປົກຄອງແຂວງ ຫລືກຳແພງນະຄອນ ແລະເຂດພິເສດ.

ມາດຕາ 22 : ການມອບເນື້ອທີ່ດິນເພື່ອປູກໄມ້ ໃນເນື້ອທີ່ແຕ່ 101-1000 ຮຕ ແມ່ນມອບໃຫ້ອຳນາດ ການປົກຄອງຂັ້ນແຂວງ, ກຳແພງນະຄອນ, ເຂດພິເສດ ເປັນຜູ້ຈັດຕັ້ງປະຕິບັດ ໂດຍການຮັບຮູ້ຈາກກະຊວງ ກະສິກຳ-ປ່າໄມ້.

ມາດຕາ 23: ການມອບເນື້ອທີ່ດິນເພື່ອປູກໄມ້ ໃນເນື້ອທີ່ 1001 ຮຕຂຶ້ນໄປ ຕ້ອງຂໍອະນຸມັດຈາກລັດຖະບານ ຈຶ່ງປະຕິບັດໄດ້.

ມາດຕາ 24: ການລົງທຶນປູກໄມ້ ຂອງນັກທຸລະກິດຕ່າງປະເທດນັ້ນ ຕ້ອງໄດ້ຜ່ານການອະນຸມັດ ຈາກຄະນະ ກຳມະການແຜນການ ແລະການຮ່ວມມື ແລະກະຊວງກະສິກຳ-ປ່າໄມ້ເສັຽກ່ອນ ເພື່ອຄົ້ນຄວ້າວາງແຜນ ແລະຮ່ວມມືນຳກັນ.

ມາດຕາ 25: ການມອບເນື້ອທີ່ປ່າໄມ້ໃຫ້ແກ່ບ້ານ, ກົມກອງ, ທະຫານຕຳຫລວດ ເພື່ອຄຸ້ມຄອງປົກປັກຮັກສາ ຕາມມາດຕາ 11 ນັ້ນ ແມ່ນມອບໃຫ້ແຂວງ ແລະເມືອງກ່ຽວຂ້ອງພ້ອມກັນຈັດຕັ້ງປະຕິບັດ.

ມາດຕາ 26: ມອບໃຫ້ກະຊວງກະສິກຳ-ປ່າໄມ້, ແຂວງ, ກຳແພງນະຄອນ ແລະເຂດພິເສດ ເປັນຜູ້ນຳໄປ ຈັດຕັ້ງປະຕິບັດ ພ້ອມທັງຕິດຕາມຜົນທີ່ໄດ້ຮັບ ເພື່ອຖອດຖອນບົດຮຽນ ແລະມີວິທີແກ້ໄຂຈຸດອ່ອນຢ່າງທັນການ.

ມາດຕາ 27: ທຸກກະຊວງ, ອົງການທຽບເທົ່າ, ເຂດພິເສດ, ແຂວງ, ກຳແພງນະຄອນ ຕ້ອງມີການ ປະສານສົມທົບແໜ້ນ ກັບຂະແໜງການປ່າໄມ້ໃນຂັ້ນຂອງຕົນ ເພື່ອເປັນເຈົ້າການຈັດການເຜີຍແຜ່ດຳລັດ ສະບັບນີ້ ໃຫ້ມີການຮັບຮູ້ ແລະ ຊາບຊຶມຢ່າງທົ່ວເຖິງ.

[illegible]: ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດໃດໆທີ່ອອກມາຢູ່ໃນເມື່ອກ່ອນ ຊຶ່ງເຫັນວ່າຂັດຕໍ່ດຳລັດສະບັບນີ້ ແມ່ນຈະຖືກລົບລ້າງໄປໝົດ.

ວຽງຈັນ, ວັນທີ 12 OCT [illegible]

ນາຍົກລັດຖະມົນຕີ

ຄຳໄຕ ສີພັນດອນ